ທຄຕລ BCEL ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

# ຮັບສະໝັກເພື່ອນຮ່ວມງານ

ຮ່ວມເປັນສ່ວນໜຶ່ງ...
ກ້າວໄປຂ້າງໜ້າສູ່ຄວາມສໍາເລັດກັບພວກເຮົາ



**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ** ເປັນທະນາຄານທີ່ດໍາເນີນການເຄື່ອນໄຫວວຽກງານພາຍໃຕ້ການຄຸ້ມຄອງຂອງກະຊວງການເງິນ, ທະນາຄານແຫ່ງ ສປປ ລາວ. ທຄຕລ ມີຄວາມມຸ່ງໝັ້ນໃນການສ້າງປະໂຫຍດ ແລະ ອໍານວຍຄວາມສະດວກໃນການເຮັດທຸລະກໍາທາງດ້ານການເງິນ ໃຫ້ແກ່ລູກຄ້າ. ປະຈຸບັນ ທຄຕລ ມີ 19 ສາຂາ ແລະ ຫຼາຍກວ່າ 70 ໜ່ວຍບໍລິການທົ່ວປະເທດ. ພວກເຮົາມີຄວາມຍິນດີ ແລະ ຕ້ອງການເພື່ອນຮ່ວມງານຈໍານວນຫຼາຍຕໍາແໜ່ງປະກອບໃຫ້ບັນດາພະແນກການ ແລະ ສາຂາທົ່ວປະເທດ ເພື່ອເຂົ້າມາຮ່ວມສ້າງສາ ແລະ ພັດທະນາ ທຄຕລ ໃຫ້ມີຄວາມກ້າວໜ້າ ແລະ ເຕີບໃຫຍ່ໄປພ້ອມໆກັນ.

**ທຄຕລ ສາຂາຜົ້ງສາລີ ຕ້ອງການຮັບພະນັກງານໃໝ່ ເພື່ອປະກອບໃຫ້ບັນດາຂະແໜງພາຍໃນທີ່ຈໍາເປັນດັ່ງນີ້:**

## 1. ວິຊາການໄອທີ 01 ຕໍາແໜ່ງ

**ເງື່ອນໄຂຜູ້ສະໝັກ:** ເພດ: **ຍິງ ຫຼື ຊາຍ** ມີອາຍຸບໍ່ເກີນ **30** ປີ.

- ✔ ມີໃບປະກາດຈົບຊັ້ນສູງຂຶ້ນໄປ ດ້ານວິທະຍາສາດຄອມພິວເຕີ, ວິສະວະກໍາຄອມພິວເຕີ, ເຕັກໂນໂລຊີຂໍ້ມູນຂ່າວສານ ຈາກພາຍໃນ ຫຼື ຕ່າງປະເທດ ມີຄະແນນ **CGPA** ໂດຍສະເລ່ຍ **2.70** ຫຼື **6.75/10** ຂຶ້ນໄປ
- ✔ ສາມາດສື່ສານພາສາອັງກິດ (ເວົ້າ, ຂຽນ, ອ່ານ) ລະດັບດີ ຫຼື ຖ້າຫາກສາມາດເວົ້າພາສາຕ່າງປະເທດອື່ນໆໄດ້ກໍຍິ່ງເປັນການດີ.
- ✔ **ຕ້ອງເປັນຄົນທ້ອງຖິ່ນແຂວງຜົ້ງສາລີ, ຫຼວງນໍ້າທາ, ອຸດົມໄຊ, ບໍ່ແກ້ວ ຫຼື ອາໄສຢູ່ແຂວງຜົ້ງສາລີເປັນການຖາວອນ.**
- ✔ ມີສຸຂະພາບແຂງແຮງ, ມີມະນຸດສໍາພັນດີ, ມີຄວາມອົດທົນ, ຊື່ສັດ ແລະ ສາມາດເຮັດວຽກນອກໂມງການໄດ້.
- ✔ ມີປະສົບການວຽກງານ IT support, ຄວາມຮູ້ພື້ນຖານສ້ອມແປງຄອມ ຫຼື ວຽກງານລະບົບສາຍຍິ່ງເປັນການດີ.

## 2. ວິຊາການ Teller ຂະແໜງການພາຍໃນ ແລະ ໜ່ວຍບໍລິການ 02 ຕໍາແໜ່ງ:

**ເງື່ອນໄຂຜູ້ສະໝັກ:** ເພດ: **ຍິງ ຫຼື ຊາຍ** ມີອາຍຸບໍ່ເກີນ **30** ປີ.

- ✔ ມີໃບປະກາດຈົບຊັ້ນສູງຂຶ້ນໄປ ດ້ານການເງິນ, ການທະນາຄານ, ບັນຊີ, ເສດຖະສາດ, ບໍລິຫານທຸລະກິດ ທີ່ມີຄະແນນ **CGPA** ໂດຍສະເລ່ຍ **2.70** ຫຼື **6.75/10** ຂຶ້ນໄປ
- ✔ ສາມາດສື່ສານພາສາອັງກິດ ຫຼື ພາສາຈີນ (ເວົ້າ, ຂຽນ, ອ່ານ) ໃນລະດັບດີ ຫຼື ຖ້າຫາກສາມາດເວົ້າພາສາຕ່າງປະເທດອື່ນໆໄດ້ກໍຍິ່ງເປັນການດີ.
- ✔ **ຕ້ອງເປັນຄົນທ້ອງຖິ່ນແຂວງຜົ້ງສາລີ, ຫຼວງນໍ້າທາ, ອຸດົມໄຊ, ບໍ່ແກ້ວ ຫຼື ອາໄສຢູ່ແຂວງຜົ້ງສາລີເປັນການຖາວອນ.**
- ✔ ມີຄວາມຮູ້ພື້ນຖານການນໍາໃຊ້ຄອມພິວເຕີ (ຖ້າມີໃບຢັ້ງຢືນຍິ່ງເປັນການດີ).
- ✔ ສາມາດເຮັດວຽກພາຍໃຕ້ໄລຍະເວລາທີ່ກໍານົດໃຫ້, ມີຄວາມອົດທົນຫ້າວຫັນ ແລະ ສາມາດເຮັດວຽກເປັນທີມໄດ້.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BCEL
BANQUE POUR LE COMMERCE EXTERIEUR LAO PUBLIC

# ຮັບສະໝັກເພື່ອນຮ່ວມງານ

ຮ່ວມເປັນສ່ວນໜຶ່ງ...
ກ້າວໄປຂ້າງໜ້າສູ່ຄວາມສຳເລັດກັບພວກເຮົາ



## ຄຸນລັກສະນະຜູ້ສະໝັກ:

- ✓ ຊື່ສັດບໍລິສຸດ, ມະນຸດສຳພັນດີ.
- ✓ ບຸກຄະລິກວ່ອງໄວຫ້າວຫັນ ແລະ ອົດທົນ .
- ✓ ລະອຽດຮອບຄອບ, ມີລະບຽບວິໄນ ແລະ ຮັບຜິດຊອບສູງ.
- ✓ ມີຄວາມສາມັກຄີ, ສາມາດເຮັດວຽກເປັນທີມໄດ້.
- ✓ ສາມາດເຮັດວຽກພາຍໃຕ້ຄວາມກົດດັນ.
- ✓ ມີໃຈຮັກໃນວຽກງານບໍລິການ.
- ✓ ກົງຕໍ່ເວລາ ແລະ ມີຄວາມເສຍສະຫຼະ.

## ວິທີສະໝັກວຽກ:

*1)* ຜູ້ທີ່ສົນໃຈສາມາດພົວພັນເຂົ້າຮັບເອກະສານດ້ວຍຕົນເອງໄດ້ທີ່ **ຂະແໜງຫ້ອງການ-ບັນຊີ-ໄອທີ ຂອງ ທຄຕລ ສາຂາຜົ້ງສາລີ.** ໂດຍໃຫ້ຖືໃບປະກາດວິຊາສະເພາະ ແລະ ໃບຄະແນນ ສະບັບຂອງແທ້ ມາຢັ້ງຢືນໃນການຂໍຮັບແບບຟອມສະໝັກງານ, ສອບຖາມຂໍ້ມູນໂທ: **088 210 224.**

*2)* ບໍ່ອະນຸຍາດໃຫ້ພໍ່ແມ່, ອ້າຍ-ເອື້ອຍ ແລະ ພີ່ນ້ອງຂອງຜູ້ສະໝັກງານມາພົວພັນຮັບ-ສົ່ງເອກະສານແທນ.

*3)* ***ກຳນົດເລີ່ມແຈກ-ຮັບ ເອກະສານສະໝັກຕັ້ງແຕ່ ວັນທີ 06-29/09/2017.***

ທີ່ຜົ້ງສາລີ, ວັນທີ 05/09/2017
ຫົວໜ້າສາຂາຜົ້ງສາລີ
ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ສາຂາ
ທະນາຄານການຄ້າ
ຕ່າງປະເທດລາວ
ມະຫາຊົນ

ຄຳຈັນ ຈັນທະມາດ